ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 792/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 11 /09/2013

# ຂໍ້ຕົກລົງ

## ວ່າດ້ວຍ ການສະໜອງເງິນກູ້ເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມ ລັດຖະບັນຍັດວ່າດ້ວຍ ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008;
- ອີງຕາມການຄົ້ນຄວ້າ ແລະ ສະເໜີ ຂອງກົມຄຸ້ມຄອງທະນາຄານທຸລະກິດ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບ ການສະໜອງເງິນກູ້ເປັນເງິນຕາຕ່າງປະເທດຂອງທະນາຄານ ເພື່ອເປັນບ່ອນອີງໃຫ້ແກ່ການຄຸ້ມຄອງ ແລະ ການສະໜອງເງິນກູ້ດັ່ງກ່າວ, ແນໃສ່ຫຼຸດຜ່ອນຄວາມສ່ຽງ, ສົ່ງເສີມການນຳໃຊ້ເງິນກີບ ແລະ ຮັກສາສະຖຽນລະພາບຂອງເງິນຕາແຫ່ງຊາດ.

**ມາດຕາ 2. ການອະທິບາຍຄຳສັບ**

ບັນດາຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງຕໍ່ໄປນີ້:

1. *"ເງິນກູ້"* ໝາຍເຖິງ ເງິນກູ້ທຳມະດາ (Loan), ເງິນເບີກເກີນບັນຊີ (OD) ແລະ ເງິນຈ່າຍລ່ວງໜ້າໃຫ້ແກ່ລູກຄ້າ (Advance);



ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la

2. “**ຜູ້ທີ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ**” ໝາຍເຖິງ ຜູ້ທີ່ມີລາຍຮັບເປັນເງິນຕາຕ່າງປະເທດ ຈາກການສົ່ງອອກ ສິນຄ້າ ຫຼື ບໍລິການໃຫ້ແກ່ຕ່າງປະເທດ; ຫຼື ມີລາຍຮັບເປັນເງິນຕາຕ່າງປະເທດ ຢູ່ພາຍໃນ ສປປ ລາວ ໂດຍສອດຄ່ອງກັບລະບຽບກົດໝາຍ;
3. “**ທະນາຄານ**” ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ.

**ມາດຕາ 3. ການສະໜອງເງິນກູ້ເປັນເງິນຕາຕ່າງປະເທດ**

ທະນາຄານ ສາມາດສະໜອງເງິນກູ້ເປັນເງິນຕາຕ່າງປະເທດ ໃຫ້ສະເພາະຜູ້ທີ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດທີ່ພຽງພໍເພື່ອຊໍາລະໜີ້ສິນທີ່ເກີດຈາກເງິນກູ້ດັ່ງກ່າວ ເທົ່ານັ້ນ.

ສໍາລັບ ເງິນກູ້ເປັນເງິນຕາຕ່າງປະເທດ ທີ່ທະນາຄານ ໄດ້ປ່ອຍກູ້ ກ່ອນຂໍ້ຕົກລົງສະບັບນີ້ ມີຜົນສັກສິດນໍາໃຊ້, ໃຫ້ທະນາຄານສືບຕໍ່ບໍລິຫານເງິນກູ້ດັ່ງກ່າວ ໃຫ້ມີຄຸນນະພາບ ແລະ ເອົາໃຈໃສ່ ເກັບກູ້ໜີ້ສິນດັ່ງກ່າວຄືນທັງຕົ້ນທຶນ ແລະ ດອກເບ້ຍ.

**ມາດຕາ 4. ມາດຕະການຕໍ່ການລະເມີດ**

ທະນາຄານທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 5. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເປັນຜູ້ຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້. ບັນດາທະນາຄານ ມີໜ້າທີ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 6. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ກໍານົດ ຫຼື ບົດບັນຍັດໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ດຣ. ສົມພາວ ໄຟສິດ